# ບົດຂ່າວກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2021




ໃນຕອນບ່າຍຂອງວັນທີ 29 ເມສາ 2022 ທີ່ຫ້ອງປະຊຸມ Grand Ballroom ທີ່ໂຮງແຮມລາວພຣາຊາ, ນະຄອນຫຼວງວຽງຈັນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ເປີດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2021 ໂດຍການເປັນປະທານຂອງ ທ່ານ ຄໍາສຸກ ສູນດາລາ, ຮອງ ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈໍານວນ 25 ທ່ານ, ຜູ້ມອບສິດຈໍານວນ 147 ທ່ານ ຊຶ່ງລວມຈໍານວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 158.149.080 ຮຸ້ນ, ນັບທັງ 1.005.209 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 76,14% ຂອງຈໍານວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດໍາເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສໍາລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈໍານວນ 49.574.220 ຮຸ້ນ ເທົ່າກັບ 23,86 % ຂອງຈໍານວນຮຸ້ນ ທຄຕລ ທັງໝົດ, ໃນນັ້ນ ມີຕາງໜ້າຜູ້ຖືຮຸ້ນລັດຖະບານໂດຍ ທ່ານ ປະສົມເພັດ ຄໍາຕັນ ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ກະຊວງການເງິນ, ຕາງໜ້າຄູ່ຮ່ວມຍຸດທະສາດ ໂດຍ ທ່ານ ສະເຕຟານ ອຽກແບັງ ຜູ້ອໍານວຍການທະນາຄານລາວຝລັ່ງ ແລະ ມີຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ ແລະ ຄະນະກໍາມະການຄຸ້ມຄອງຫຼັກຊັບເຂົ້າຮ່ວມຕິດຕາມກອງປະຊຸມຕາມລະບຽບການ, ເຊິ່ງກອງປະຊຸມກໍ່ໄດ້ເອົາໃຈໃສ່ໃນການປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງເຄັ່ງຂັດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC




ກອງປະຊຸມ ໄດ້ ໄດ້ພິຈາລະນາຮັບຮອງເອົາ 5ວາລະຄື: ຮັບຮອງເອົາບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນຄັ້ງຜ່ານມາ, ຮັບຮອງເອົາບົດລາຍງານການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2021, ຮັບຮອງແຜນການປະຈຳປີ 2022, ຮັບຮອງດ້ານຫຼັກການໃນການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2022.